ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117

E-mail:Lcc@laocement.com,www.laocement.com

ບົດລາຍງານການດຳເນີນທຸລະກິດປະຈຳປີ 2019

ຂອງບໍລິສັດຊີມັງລາວມະຫາຊົນ

ຮຽນ: ບັນດາທ່ານຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນ ທີ່ເຄົາລົບນັບຖືຢ່າງສູງ

ຂ້າພະເຈົ້າຂໍລາຍງານສະພາບການດຳເນີນທຸລະກິດປະຈຳປີ 2019 ຂອງບໍລິສັດ ຊີມັງລາວ ມະຫາຊົນ ຕໍ່ກອງປະຊຸມພິຈາລະນາ.

I. ສະພາບການດຳເນີນທຸລະກິດປະຈຳປີ 2019

ປີ 2019 ການຜະລິດຊີມັງທັງໝົດໄດ້ 189,600 ໂຕນ,ການຈຳໜ່າຍຊີມັງທັງໝົດໄດ້ 185,000 ໂຕນ, ຄາດວ່າລາຍຮັບການດຳເນີນທຸລະກິດໝົດປີ 2019 ຕາມຄວາມເປັນຈິງປະມານ 9,400,000 ໂດລາ,ຂາດທຶນທັງໝົດຈຳນວນ 2,530,000ໂດລາ.ສາເຫດຕົ້ນຕໍທີ່ພາໃຫ້ການຂາດທຶນ :

- ດ້ານຕະຫຼາດ : ໂຮງງານຊີມັງເກີດໃໝ່ຫຼຸດລາຄາຢ່າງຕໍ່ເນື່ອງພາໃຫ້ດ້ານຕະຫຼາດມີການແຂ່ງຂັນຢ່າງຮ້າຍແຮງ ເຮັດໃຫ້ລາຄາຊີມັງຂອງໂຮງງານພວກເຮົາຫຼຸດລົງ.
- ດ້ານຕົ້ນທຶນ : ສາຍການຜະລິດໂຮງງານຂອງພວກເຮົາແມ່ນໄດ້ນຳໃຊ້ເປັນເວລາ 20 ປີຜ່ານມາແລ້ວ,ສິ້ນເປືອງພະລັງງານໃນການຜະລິດສູງ, ຕົ້ນທຶນການບຳລຸງຮັກສາສ້ອມແປງແຕ່ລະປີເພີ່ມຂຶ້ນ.

◆ **ບໍລິສັດສຳເລັດວຽກງານສຳຄັນໝົດປີມີດັ່ງລຸ່ມນີ້:**

1. ເພື່ອຮັບປະກັນປະລິມານການຈຳໜ່າຍໃຫ້ຄົງທີ ແລະສືບຕໍ່ການຜະລິດຂອງໂຮງງານຢ່າງຕໍ່ເນື່ອງ, ໂດຍໄດ້ເຊັນສັນຍາໃໝ່ກັບໂຄງການເສັ້ນທາງດ່ວນ ແລະໂຄງການເຂື່ອນໄຟຟ້ານ້ຳງຶ່ມ 4 ເປັນເວລາ 2 ປີນັບແຕ່ປີ 2019 ເປັນຕົ້ນມາ, ສ່ວນປະລິມານການສະໜອງນັ້ນປະມານ 140, 000 ໂຕນ.
2. ກຳນົດມາດຕະການຫຼຸດຜ່ອນຕົ້ນທຶນ ແລະການຈັດຕັ້ງປະຕິບັດຕົວຈິງ.

- ນຳໃຊ້ແຮ່ເຫຼັກສັງກະສີເຂົ້າເປັນວັດຖຸປະກອບ ແລະ ສຳເລັດການທົດລອງຈັກປົດນ້ອຍ,ທົດລອງການຜະລິດຈັກປົດໃຫຍ່ເປັນເວລາຫຼາຍຄັ້ງ,ໂດຍໄດ້ປ້ອນເຂົ້າຜະລິດຊີມັງປະເພດ 325 ແລະ 425,ຜະລິດຕະພັນທີ່ນຳໃຊ້ວັດຖຸປະກອບໃໝ່, ຄຸນນະພາບໄດ້ມາດຕະຖານ ແລະໄດ້ຮັບຄວາມນິຍົມຈາກລູກຄ້າ ແລະ ສາມາດປະຢັດການນຳໃຊ້ກະລັງເກີໄດ້ເຖິງ 5%.

- ຮີບຮ້ອນພັດທະນາຊັບພະຍາກອນຄື : ດຶ່ງດູດຜູ້ຮ່ວມມືໃນການຜະລິດຫີນຂີບປຸງແຕ່ງຈຳໜ່າຍສູ່ຕະຫຼາດນອກ, ເຊິ່ງຕົ້ນປີ 2020 ໄດ້ເຫັນຜົນປະໂຫຍດຢ່າງມີປະສິດທິຜົນ.2.ສືບຕໍ່ຜັກດັນວຽກງານສຳຫຼວດຊັບພະຍາກອນແຮ່ທາດທີ່ບໍ່ຖ່ານຫີນຄອນຜຸກ ສຳເລັດວຽກງານການຊີເຈາະໃນຂັ້ນເບື້ອງຕົ້ນ ແລະ ໄດ້ຮັບການຂະຫຍາຍສິດທິໃນການສຳຫຼວດທາງດ້ານເວລາ ພ້ອມສະເໜີ ແລະລາຍງານວຽກງານການສຳຫຼວດໃຫ້ແກ່ກະຊວງທີ່ກ່ຽວຂ້ອງຂອງທ້ອງຖິ່ນ.

- ເພື່ອແກ້ໄຂບັນຫາການສະໜອງຖ່ານຫີນຢ່າງເຄັ່ງຄັດ,ໄດ້ແນະນຳຜູ້ສະໜອງໃໝ່ທີ່ຢູ່ໃກ້ໂຮງງານໃຫ້ອອກແບບກໍ່ສ້າງ ແລະຕິດຕັ້ງເຄື່ອງຈັກລ້າງຖ່ານ ເພື່ອຄວບຄຸມຄຸນນະພາບຖ່ານຫີນໃນການຈັດຊື້ ແລະຫຼຸດຜ່ອນຕົ້ນທຶນ,ສຳລັບວຽກງານນີ້ ໃນຕົ້ນປີ 2020 ແມ່ນສາມາດດຳເນີນການໄດ້ແລ້ວ.

- ຜັກດັນກົນໄກໃນການປັບປຸງການຈັດຕັ້ງດ້ວຍການຫຼຸດຜ່ອນພະນັກງານ ແລະ ຄ່າໃຊ້ຈ່າຍໃຫ້ໜ້ອຍລົງ,ໄດ້ສະເໜີແບບແຜນຍົກຍ້າຍສຳນັກງານໃຫຍ່ມາຢູ່ວັງວຽງ ແລະ ໄດ້ຮັບການອະນຸມັດຈາກຜູ້ຖືຮຸ້ນລາຍໃຫ່ຍ ແລະກອງປະຊຸມສະພາບໍລິຫານ.

3. ສືບຕໍ່ປັບປຸງດ້ານເຕັກນິກຄືນໃໝ່, ກ່ອນລະດູຝົນປີ 2019 ໄດ້ສຳເລັດໂຄງການປັບປຸງສາງເກັບກະລິງເກົ່າເພື່ອຫຼຸດຜ່ອນການກອງວັດຖຸດັ່ງກ່າວໃນການແຈ້ງ ແລະ ແກ້ໄຂບັນຫາຖັງເຕົ້ມໃນລະດູຝົນທີ່ມັກບໍ່ພຽງພໍ່ໃນລະດູແລ້ງ, ພ້ອມຈັດຊື້ເຄື່ອງ X-RAY ເພື່ອຍົກສູງປະສິດທິຜົນໃນການປະກອບວັດຖຸທາງດ້ານເຕັກນິກ.
4. ໄດ້ເປີດກອງປະຊຸມສະພາບໍລິຫານ, ກອງປະຊຸມຜູ້ຖືຮຸ້ນ ຕາມກົດລະບຽບທີ່ກຳນົດໄວ້ ແລະ ສຳເລັດການປັນຜົນຂອງປີ 2018 ໃຫ້ແກ່ຜູ້ຖືຮຸ້ນ ປະມານ 150,000 ໂດລາສະຫະລັດ.
5. ໄດ້ຈັດຕັ້ງປະຕິບັດໃນການກວດກາ ແລະແກ້ໄຂບັນຫາບົກຊ້ອນທາງດ້ານຄວາມປອດໄພ ແລະ ຮັກສາ-ຄຸ້ມຄອງເຄື່ອງຈັກໃຫ້ໃໝ່ ລວມທັງຮັບປະກັນບໍ່ໃຫ້ເກີດອຸບັດຕິເຫດທາງດ້ານຄວາມປອດໄພ ແລະ ບັນລຸມາດຕະ ຖານການຄຸ້ມຄອງດ້ານສິ່ງແວດລ້ອມ.

II.ການຈັດຕັ້ງປະຕິບັດວຽກງານໃນ ປີ 2020

ວຽກຫຼັກໃນປີ 2020 ຕ້ອງຖືເອົາການປ່ຽນສະພາບຂາດທຶນເປັນວຽກທີ່ສຳຄັນເຊັ່ນ : ຜັກດັນກົນໄກໃນການປັບປຸງການຈັດຕັ້ງດ້ວຍການຫຼຸດຜ່ອນພະນັກງານ, ເພີ່ມລາຍຮັບປະຢັດລາຍຈ່າຍ,ສູ້ຊົນໃຫ້ວຽກການພັດທະນາຂຸດຄົ້ນບໍ່ຖ່ານຫີນໃຫ້ມີຄວາມກ້າວໜ້າ,ລາຍລະອຽດມີດັ່ງລຸ່ມນີ້ :

1) ສືບຕໍ່ການປະຕິຮູບໃຫ້ເລິກເຊິ່ງ, ປັບປຸງກົນໄກຈັດຕັ້ງ,ຫຼຸດຜ່ອນພະນັກງານ,ຈັດຕັ້ງປະຕິບັດແບບແຜນລວບລວມສຳນັກງານໃຫຍ່ ແລະໂຮງງານໃຫ້ເປັນອັນໜຶ່ງອັນດຽວກັນ.
2) ເລັ່ງການເກັບໜີ້ສິນໃຫ້ໄດ້ໂດຍໄວ.
3) ຮັບປະກັນການຈຳໜ່າຍຊີມັງໃຫ້ກັບບັນດາໂຄງການໃຫ່ຍທີ່ມີທ່າແຮງໃນຂົງເຂດ ແລະລາຄາທີ່ເໝາະສົມ, ພ້ອມນັ້ນຕ້ອງຫຼຸດຜ່ອນ ແລະຢຸດສະໜອງຊີມັງທີ່ມີລາຄາຕ່ຳຕາມສັນຍາ.

4) ປະຢັດພະລັງງານ, ຫຼຸດຜ່ອນຕົ້ນທຶນຕໍ່ຫົວໜ່ວຍ,ເນັ້ນການຄວບຄຸມຄຸນນະພາບ, ຕົ້ນທຶນການຈັດຊື້ວັດຖຸເຊື້ອເພີງຖ່ານຫີນ ແລະ ວັດຖຸອຸປະກອນອາໄລ່ຕ່າງໆ,ຍົກສູງການຄວບຄຸມເຕົາ ແລະ ເຕັກນິກໃນການປະກອບວັດຖຸ ລວມທັງຄວບຄຸມເຕົາໃຫ້ຢຸດໜ້ອຍທີ່ສຸດ, ພ້ອມນັ້ນຕ້ອງເພີ່ມປະສິດທິພາບ ຂອງວັດຖຸປະກອບ ແລະນຳໃຊ້ນ້ຳຢາຊ່ວຍບົດທີ່ສຳຄັນຕ້ອງຄວບຄຸມຄວາມເຂັ້ມເກີນ ຂອງຜະລິດຕະພັນໃຫ້ຢູ່ໃນເກນທີ່ເໝາະສົມ.
5) ຮີບເລັ່ງພັດທະນາຊັບພະຍາກອນລວມໃຫ້ມີຄວາມຄືບໜ້າ : 1. ເລັ່ງສ້າງໂອກາດໃນການຈຳໜ່າຍຫີນປູນອອກສູ່ຕະຫຼາດພາຍນອກເປັນຕົ້ນແມ່ນ : ໂຄງການກໍ່ສ້າງທາງດ່ວນ ແລະທາງລົດໄຟລາວ-ຈີນ . 2. ຮີບເລັ່ງພັດທະນາຊັບພະຍາກອນຖ່ານຫີນ ແລະ ຜ່ານບົດລາຍງານປະລິມານສະສົມຖ່ານຫີນ ໃນການຊອກຄົ້ນສຳຫຼວດ, ທົບທວນ ແລະ ດຶງດູດຜູ້ຮ່ວມມືເພື່ອພ້ອມກັນພັດທະນາຊັບພະຍາກອນຖ່ານຫີນໃຫ້ໄດ້ຮັບໝາກຜົນໂດຍໄວ.
6) ຮັກສາວຽກງານຄວາມປອດໄພດ້ານສິ່ງແວດລ້ອມໃຫ້ເຂັ້ມງວດ ພ້ອມຮັບປະກັນອຸບັດຕິເຫດໃຫ້ເປັນສູນ.

ເນື້ອໃນບົດລາຍງານນີ້ແມ່ນໄດ້ສິ້ນສຸດລົງ, ສະເໜີໃຫ້ຜູ້ຖືຮຸ້ນ ແລະຜູ້ຕາງໜ້າຜູ້ຖືຮຸ້ນ ພິຈາລະນາ ແລະຮັບຮອງ.

ບໍລິສັດ ຊີມັງລາວ ມະຫາຊົນ

ບໍລິສັດ ຊີມັງລາວ ມະຫາຊົນ
Lao Cement Public Company